# ມິຊຊາສົມໂພດພຣະກຣິສຕະສົມພົບ (ກາງຄືນ)

## ວັນທີ 24 ທັນວາ 2021



**ພຣະວໍລະສານໂດຍນັກບຸນລູກາ 2, 1-14**

ໃນເວລານັ້ນ, ພຣະເຈົ້າເຊຊາເຣເອົາກູດສະໂຕຊົງມີພະລາດຊະດຳຣັດສັ່ງໃຫ້ຈົດທະບຽນສຳມະໂນຄົວທົ່ວຈັກກະພົບ. ການຈົດທະບຽນຄັ້ງທຳອິດໄດ້ທຳຂຶ້ນໃນສະໄໝທ່ານຊີຣີໂນເປັນຜູ້ປົກຄອງແຂວງຊີຣີອາ. ພົນລະເມືອງທັງຫລາຍຕ່າງຄົນຕ່າງໄປຈົດທະບຽນສຳມະໂນຢູ່ບ້ານເກົ່າເມືອງເດີມຂອງຕົນ. ຢໍແຊກໍໄດ້ຈາກບ້ານນາຊາແຣດແຂວງຄາລີເລໄປພ້ອມກັບພຣະນາງມາຣີອາ ຜູ້ພັນລະຍາທີ່ຖືພາຢູ່, ເພື່ອໄປເບັດເລແຮມເມືອງຂອງພະຍາດາວິດໃນແຂວງຢູເດ, ຍ້ອນວ່າທ່ານສືບເຊື້ອສາຍເປັນລູກຫລານຂອງພະຍາດາວິດ. ເວລາທ່ານທັງສອງພັກຢູ່ເມືອງນັ້ນ, ກໍພໍດີເຖິງເວລາພຣະນາງຈະປະສູດ. ພຣະນາງກໍໄດ້ປະສູດບຸດຫົວປີພຣະນາງໄດ້ເອົາແພມາຫົ່ມໃຫ້, ແລ້ວວາງລົງນອນໃນຮາງຫຍ້າຍ້ອນບໍ່ມີບ່ອນພັກເຊົາຢູ່ໃນເຮືອນພັກ.

ໃນບໍລິເວນນັ້ນ, ມີພວກຊຸມພາບານພວມເຝົ້າເບິ່ງຝູງສັດໃນຍາມກາງຄືນ. ເທວະດາຂອງພຣະເຈົ້າໄດ້ປະຈັກຢູ່ໃກ້ໆພວກເຂົາແລະມີແສງສະວ່າງຂອງພຣະເຈົ້າຫຸ້ມອ້ອມພວກເຂົາ. ພວກເຂົາພາກັນຕົກໃຈຢ້ານສັ່ນ. ເທວະດາຈຶ່ງບອກວ່າ: “ພວກເຈົ້າຢ່າຢ້ານກົວເລີຍ, ເຮົາມາແຈ້ງຂ່າວຄວາມຍິນດີອັນຍິ່ງໃຫຍ່ສຳລັບປະຊາຊົນທຸກຄົນໃຫ້ພວກເຈົ້າຊາບ, ຄືວ່າ ມື້ນີ້ເອງອົງຜູ້ບັນດານຄວາມຣອດຜູ້ແມ່ນພຣະກຣິສໂຕເຈົ້າໄດ້ບັງເກີດມາຢູ່ເມືອງຂອງພະຍາດາວິດ. ພວກເຈົ້າຈະຮູ້ຈັກພຣະອົງດ້ວຍສຳຄັນນີ້ຄື: ພວກເຈົ້າຈະພົບເຫັນກຸມານນ້ອຍຜູ້ໜຶ່ງ ຫົ່ມແພນອນຢູ່ໃນຮາງຫຍ້າ”.

ໃນເວລາດຽວກັນນັ້ນ, ຝູງເທວະດາແຫ່ງກອງທັບສະຫວັນເປັນຈຳນວນມາກມາຍ ກໍຮ່ວມສຽງກັບເທວະດາຜູ້ມາສົ່ງຂ່າວຮ້ອງຍ້ອງຍໍສໍລະເສີນພຣະເປັນເຈົ້າວ່າ: “ສິມຸງຄຸນໃຫ້ພຣະເປັນເຈົ້າຢູ່ສະຫວັນສູງສຸດ, ແລະສັນຕິສຸກຈົ່ງມີແກ່ຄົນຊອບທຳໃນແຜ່ນດິນ”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ພີ່ນ້ອງທີ່ຮັກແພງ, ບຸນໂນແອນປີນີ້ພວກເຮົາມີໂອກາດໄດ້ມາເຕົ້າໂຮມກັນເພື່ອສະຫລອງການບັງເກີດມາຂອງພຣະເຢຊູກຸມານ, ພຣະຜູ້ກູ້ໄຖ່ຂອງພວກເຮົາ. ເພາະສອງປີກ່ອນພວກເຮົາບໍ່ໄດ້ມີໂອກາດນີ້ຍ້ອນການລະບາດຂອງພະຍາດໂກວິດ 19. ເຖິງແມ່ນວ່າປີນີ້ພວກເຮົາໄດ້ສະຫລອງຮ່ວມກັນວັນບຸນໂນແອນ, ແຕ່ໂລກລະບາດໂກວິດກໍຍັງຢູ່ກັບພວກເຮົາ. ຍິ່ງໄປກວ່ານັ້ນ, ພວກເຮົາຍັງມີໂກວິດພັນໃໝ່ປາກົດຂຶ້ນອັນແມ່ນ "ໂອມີໂຄນ". ໂກວິດພັນໃໝ່ນີ້ເບິ່ງຄືຮ້າຍແຮງແລະລະບາດໄວກວ່າພັນເກົ່າອີກ. ສິ່ງເຫລົ່ານີ້ທຳໃຫ້ທຸກຄົນຢູ່ໃນຄວາມກັງວົນແລະກົວຢ້ານ. ດ້ວຍເຫດນີ້, ສິ່ງທີ່ພວກເຮົາລໍຖ້າແມ່ນການສິ້ນສຸດຂອງໂລກລະບາດໂກວິດ. ຫລືຢ່າງນ້ອຍ, ແມ່ນຢາວັກຊີນທີ່ສາມາດຕ້ານຕໍ່ໂລກລະບາດໂກວິດທຸກຊະນິດ. ສະຫລຸບແລ້ວ, ສິ່ງທີ່ພວກເຮົາລໍຖ້າແມ່ນຜູ້ທີ່ຈະມາປົດປ່ອຍພວກເຮົາອອກຈາກຄວາມຕາຍທີ່ມາຈາກໂກວິດ.

ແຕ່ແລ້ວ, ຜູ້ທີ່ບັງເກີດມາໃນຄ່ຳຄືນນີ້ພັດແມ່ນເດັກນ້ອຍຜູ້ໜຶ່ງທີ່ນອນຢູ່ໃນຮາງຫຍ້າ. ຊ້ຳບໍ່ໜຳການເກີດມາຂອງເດັກນ້ອຍນີ້ພັດບໍ່ຄືກັບເດັກນ້ອຍອື່ນໃນໂລກ ທີ່ເກີດມາໃນໂຮງພະຍາບານຫລືໃນເຮືອນຊານ, ແຕ່ແມ່ນຢູ່ທ່າມກາງຝູງສັດ, ທ່າມກາງຄົນລ້ຽງແກະ, ທ່າມກາງຄົນທຸກຈົນ. ກຸມານນ້ອຍທີ່ເກີດມານີ້ພັດບໍ່ໄດ້ຖືຫລອດຢາວັກຊີນຕ້ານໂກວິດໂອມີໂຄນມາພ້ອມ, ແຕ່ເພິ່ນໄດ້ເກີດມາໃນຮູບແບບຂອງເດັກນ້ອຍທາລົກອ່ອນແອ, ໄຮ້ດຽງສາ. ຊຶ່ງເປັນເຫດການທີ່ບໍ່ໄດ້ຄາດຫວັງແລະກົງກັນຂ້າມກັບສິ່ງທີ່ພວກເຮົາລໍຖ້າ.

ແມ່ນແທ້, ພຣະບຸດຂອງພຣະເຈົ້າໄດ້ເລືອກເອົາວິຖີຊີວິດທີ່ຕ່ຳນ້ອຍ, ທຸກຍາກແລະບໍ່ມີໃຜຮູ້ຈັກເພື່ອລົງມາຫາພວກເຮົາ. ພຣະອົງລົງມາບັງເກີດບ່ອນທີ່ຕ່ຳທີ່ສຸດເພື່ອຍົກພວກເຮົາຂຶ້ນບ່ອນທີ່ສູງທີ່ສຸດອັນແມ່ນອານາຈັກຂອງພຣະອົງ. ພຣະເຢຊູໄດ້ລົງມາເກີດເປັນເດັກນ້ອຍທຸກຈົນເພື່ອໃຫ້ພວກເຮົາໄດ້ຮັ່ງມີໃນຄວາມຮັກຂອງພຣະບິດາເຈົ້າ. ການທີ່ພຣະເຢຊູຮັບມາບັງເກີດວັນນີ້ແມ່ນເພື່ອມອບຊີວິດຂອງພຣະອົງໃຫ້ພວກເຮົາ. ສິ່ງນີ້ສະແດງອອກຢ່າງຈະແຈ້ງຢູ່ບົນກາງເຂນ. ເມື່ອພຣະເຢຊູເຈົ້າມອບຊີວິດຂອງພຣະອົງເພື່ອຕາຍແທນພວກເຮົາຜູ້ເປັນຄົນບາບ. ນີ້ແລ, ແມ່ນຄວາມໝາຍຂອງບຸນໂນແອນ. ເພາະບຸນໂອແອນເປັນບຸນທີ່ພຣະເຈົ້າລົງມາຢູ່ນຳມະນຸດ ຍ້ອນຮັກມະນຸດ. ນີ້ແລແມ່ນຜູ້ຊຶ່ງພວກເຮົາລໍຖ້າຢ່າງແທ້ຈິງ. ຍ້ອນຜູ້ທີ່ພວກເຮົາລໍຖ້າບໍ່ແມ່ນທ່ານໝໍທີ່ມາຊ່ວຍພວກເຮົາໃຫ້ຫວິດຕາຍຝ່າຍກາຍເທົ່ານັ້ນ, ແຕ່ແມ່ນທ່ານໝໍທີ່ສາມາດປິ່ນປົວພວກເຮົາທັງຝ່າຍກາຍແລະຝ່າຍວິນຍານອີກດ້ວຍ. ນີ້ແລແມ່ນເຫດຜົນທີ່ພວກເຮົາຕ້ອງມີຄວາມຍິນດີໃນຄ່ຳຄືນວັນນີ້. ພວກເຮົາຕ້ອງມີຄວາມຫວັງ ເພາະພຣະຜູ້ກູ້ໄຖ່ຢູ່ກັບພວກເຮົາ. ເພາະພຣະອົງແມ່ນອົງແຫ່ງແອມມານູແອນ, ໝາຍວ່າ: "ພຣະເຈົ້າສະຖິດຢູ່ນຳພວກເຮົາ".

ຂໍໃຫ້ການບັງເກີດມາຂອງພຣະເຢຊູເຈົ້າໃນຄ່ຳຄືນວັນນີ້ຊ່ວຍພວກເຮົາໃຫ້ອອກຈາກຄວາມກັງວົນຢ້ານກົວເພື່ອໄປສູ່ຄວາມຫວັງແລະຄວາມຍິນດີທີ່ມາຈາກພຣະຜູ້ກູ້ໄຖ່ຂອງພວກເຮົານັ້ນເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ